ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ເປີດກວ້າງຄວາມຮູ້ດ້ານການບໍລິຫານ ການເງິນຈຸລະພາກ



ສະມາຄົມການເງິນຈຸລະພາກ (ສມກຈ) ຮ່ວມກັບກົມຄຸ້ມຄອງສະຖາບັນການເງິນ (ກຄສງ) ທະນາຄານແຫ່ງ ສປປ ລາວ (ທຫລ) ພາຍໃຕ້ການສະໜັບສະໜູນ ໂດຍອົງການ ADA ໄດ້ຈັດຕັ້ງການຝຶກອົບຮົມຫຼັກສູດບໍລິຫານການເງິນຈຸລະພາກ ຮຸ່ນທີ XX ຊຶ່ງຈັດຂຶ້ນໃນວັນທີ 15 ມີນາ ແລະ ຈະສຳເລັດໃນວັນທີ 9 ເມສາ 2021 (ລວມທັງໝົດ 21 ວັນ) ທີ່ຫ້ອງປະຊຸມ ກຄສງ, ອາຄານຕະຫຼາດຫຼັກຊັບລາວ ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ພັນທະບູນ ໄຊຍະເພັດ ຮອງຫົວໜ້າກົມ ກຄສງ; ທ່ານ ສົມພອນ ສີແສງລັດ ປະທານສະພາບໍລິຫານ ສມກຈ; ທ່ານ ນາງ ປະມອນ ເພັດທານີ ຜູ້ອຳນວຍການ ສມກຈ; ມີວິທະຍາກອນ-ບັນດານັກຝຶກອົບຮົມຈາກ ທຫລ ແລະ ສະຖາບັນການເງິນຈຸລະພາກຈຳນວນໜຶ່ງ.

ການຝຶກອົບຮົມຫຼັກສູດບໍລິຫານການເງິນຈຸລະພາກ (Microfinance Management Certificate Course-MFMCC) ໃນຄັ້ງນີ້ ເບື້ອງຕົ້ນຈະໄດ້ເຂົ້າໃຈຄວາມຮູ້ກ່ຽວກັບການບໍລິຫານການເງິນຈຸລະພາກ ໃນນີ້ຫຼັກສູດປະກອບມີ 8 ວິຊາ ຄວາມຮູ້ພື້ນຖານກ່ຽວກັບການເງິນຈຸລະພາກ; ການວາງແຜນທຸລະກິດ ແລະ ຍຸດທະສາດ; ການບໍລິຫານບຸກຄະລາກອນ ແລະ ທັກສະການເປັນຜູ້ນຳ; ການບໍລິຫານສິນເຊື່ອ ແລະ ໜີ້ຊັກຊ້າ; ການຄຸ້ມຄອງທີ່ດີ ແລະ ການຄຸ້ມຄອງສະພາບໍລິຫານ; ການບໍລິຫານການເງິນ ແລະ ການບໍລິຫານການປະຕິບັດທາງດ້ານສັງຄົມ ແລະ ການບັນຊີ ແລະ ລະບົບຂໍ້ມູນ; ການພັດທະນາຜະລິດຕະພັນ; ການປະຕິບັດຕາມຂໍ້ກຳນົດກົດລະບຽບ ແລະ ການຄວບຄຸມພາຍໃນ. ຜູ້ເຂົ້າຮ່ວມຈະມີການສອບເສັງຄະແນນຜ່ານ 70%; ໃນນັ້ນ ວິຊາການດ້ານນິຕິກຳກົດໝາຍຕ້ອງໄດ້ ຄະແນນຜ່ານ 70%.

ຫຼັກສູດບໍລິຫານການເງິນຈຸລະພາກ ແມ່ນໄດ້ອອກແບບສະເພາະ ສປປ ລາວ ຊຶ່ງຈະໄດ້ຊ່ວຍເພີ່ມຄວາມຮູ້-ຄວາມສາມາດຂອງບັນດາຜູ້ຈັດການຂອງສະຖາບັນການເງິນຈຸລະພາກ (ສກຈ) ໃຫ້ເຂັ້ມແຂງຍິ່ງຂຶ້ນ; ພ້ອມທັງເປັນການສະໜັບສະໜູນໃນການດຳເນີນງານຂອງຂະແໜງການເງິນຈຸລະພາກ ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນ ແລະ ທັງຈະເປັນຜົນດີໃຫ້ສະຖາບັນ ແລະ ຂະແໜງການເງິນໃນ ສປປ ລາວ ມີຄວາມຍືນຍົງ; ຫຼັກສູດຝຶກອົບຮົມໃນເທື່ອນີ້ແມ່ນຈະໄດ້ຮັບການອຳນວຍຄວາມສະດວກ ໂດຍທີມຄູຝຶກ MFMCC ທີ່ໄດ້ຜ່ານຫຼັກສູດຄູຝຶກ ແລະ ຮັບການຢັ້ງຢືນຈາກໂຮງຮຽນ ແຟັງເຟີດ, ປະເທດເຢຍລະມັນ ແລະ ໃນວັນທີ 9 ເມສາ 2021 ບັນດານັກຝຶກອົບຮົມທັງໝົດຈະໄດ້ມີການສອບເສັງ ແລະ ຈະໄດ້ຮັບໃບຢັ້ງຢືນຈາກກົມຄຸ້ມຄອງສະຖາບັນການເງິນ.

**# ຂ່າວ-ພາບ: ຮັດສະໝີ ດວງສັດຈະ**